ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ສຳນັກງານປົກຄອງແຂວງຄຳມ່ວນ

ເລກທີ...01...../ຈຂ/ຄມ

ຄຳມ່ວນ, ວັນທີ..29..ມັງກອນ 2013

# ຄຳສັ່ງແນະນຳ

## ຂອງເຈົ້າແຂວງໆຄຳມ່ວນ

ກ່ຽວກັບການເພີ່ມທະວີ ຄວາມເຂັ້ມງວດໃນການຄຸ້ມຄອງ, ປົກປັກຮັກສາ
ຊັບພະຍາກອນ ປ່າໄມ້ ແລະ ການຂຸດຄົ້ນໄມ້.

- ອີງຕາມ: ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ແຫ່ງ ສປປ ລາວ ສະບັບເລກທີ 03/ສພຊ, ລົງວັນທີ 21 ຕຸລາ 2011.
- ອີງຕາມ: ກົດໝາຍວ່າດ້ວຍປ່າໄມ້ ສະບັບເລກທີ 06 /ສພຊ, ລົງວັນທີ 24 ທັນວາ 2007.
- ອີງຕາມ: ຄຳສັ່ງ ເລກທີ 17 /ນຍ, ລົງວັນທີ 22 ກັນຍາ 2008 ວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ, ປົກປັກຮັກສາ ແລະ ການຂຸດຄົ້ນໄມ້.
- ອີງຕາມ: ຂໍ້ຕົກລົງຂອງນາຍົກລັດຖະມົນຕີສະບັບເລກທີ 32/ນຍ, ລົງວັນທີ 06 /3/ 2012 ວ່າດ້ວຍ ການຮັບຮອງເອົາຍັດຕິກອງປະຊຸມ ການຄຸ້ມຄອງປ່າໄມ້,ການກວດກາປ່າໄມ້ ແລະ ການທຸລະກິດໄມ້ ຄັ້ງວັນທີ 25-26/1/2012.
- ອີງຕາມ: ຄຳແນະນຳຂອງລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 0088/ກປ ລົງວັນທີ 10/7/2012 ກ່ຽວກັບການຈັດຕັ້ງຜັນຂະຫຍາຍຂໍ້ຕົກລົງຂອງນາຍົກລັດຖະມົນຕີສະບັບເລກທີ 32/ນຍ, ລົງວັນທີ 06 /3/ 2012 /ນຍ,

ໃນໄລຍະຜ່ານມາ ພັກ ແລະ ລັດຖະບານ ໄດ້ມີນະໂຍບາຍ, ມີກົດໝາຍ ແລະ ອອກລະບຽບການຕ່າງໆ ກ່ຽວກັບການຄຸ້ມຄອງປົກປັກຮັກສາປ່າໄມ້ ແລະ ທຸລະກິດໄມ້ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ພັກ-ລັດ, ອົງການຈັດຕັ້ງສັງຄົມ ຕະຫລອດເຖິງພະນັກງານ, ທະຫານ, ຕຳຫລວດ ແລະ ພໍ່ແມ່ປະຊາຊົນ ເປັນເຈົ້າການໃນການຈັດຕັ້ງປະຕິບັດ.

ເຖິງຢ່າງໃດກໍຕາມ ຄຽງຄູ່ກັບດ້ານຕັ້ງໜ້າແລ້ວ ຍັງສັງເກດເຫັນວ່າ ການຈັດຕັ້ງສັງຄົມ ແລະ ປະຊາຊົນຈຳນວນໜຶ່ງ ຍັງບໍ່ທັນ ເຂົ້າໃຈຢ່າງເລິກເຊິ່ງ ກ່ຽວກັບຍຸດທະສາດການພັດທະນາປ່າໄມ້ຂອງລັດຖະບານ ເປັນຕົ້ນແມ່ນ ການເຮັດໃຫ້ເນື້ອທີ່ປ່າໄມ້ປົກຫຸ້ມເຖິງ 65% ໃນປີ 2015 ແລະ 70% ໃນປີ 2020 ຂອງເນື້ອທີ່ທົ່ວປະເທດ. ເຊິ່ງສະແດງອອກໃນການຄຸ້ມຄອງ, ການປົກປັກຮັກສາ ແລະ ການອານຸຍາດ ຍັງບໍ່ທັນເຂົ້າສູ່ຂັ້ນຕອນລະບຽບການຢ່າງຖືກຕ້ອງ, ຍິ່ງໄປກວ່ານັ້ນ ການສະເໜີຮ້ອງຂໍໄມ້ເພື່ອປຸກສ້າງ, ສ້ອມແປງໂຄງການລົງທຶນຂອງລັດ ແລະ ເພື່ອຊົມໃຊ້ຄອບຄົວ ແມ່ນມີທ່າອ່ຽງເພີ່ມຂຶ້ນ ແລະ ມີບາງອັນບໍ່ສອດຄ່ອງກັບຄວາມເປັນຈິງ.

ສະນັ້ນ, ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດ ກ່ຽວກັບກົດໝາຍ ແລະ ນິຕິກຳຕ່າງໆທີ່ກ່ຽວຂ້ອງກັບປ່າໄມ້ມີຄວາມສັກສິດ ໂດຍບໍ່ຈຳເປັນຕ້ອງອອກຄຳສັ່ງ, ຄຳແນະນຳເພີ່ມເຕີມໃນແຕ່ລະປີ ແລະ ເພື່ອເຮັດໃຫ້ແຕ່ລະທ້ອງຖິ່ນ ( ເມືອງ ), ພະແນກການ, ຂະແໜງການ ໂດຍສະເພາະ ອົງການທີ່ກ່ຽວຂ້ອງສາມາດເສີມຂະຫຍາຍຄວາມເປັນເຈົ້າການ ໃນການປະຕິບັດພາລະບົດບາດຂອງຕົນກ່ຽວກັບການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້.

ເຈົ້າແຂວງໆຄຳມ່ວນ ອອກຄຳສັ່ງແນະນຳດັ່ງນີ້:

1. ໃຫ້ບັນດາເມືອງ, ບັນດາພະແນກການ, ກົມກອງ ເພີ່ມທະວີຄວາມຮັບຜິດຊອບ ແລະເອົາໃຈໃສ່ໃນການປະຕິບັດສິດ ແລະ ໜ້າທີ່ຂອງຕົນ ກ່ຽວກັບການຄຸ້ມຄອງປ່າໄມ້ ແລະ ທຸລະກິດໄມ້ ໂດຍການສົມທົບແໜ້ນ ທາງດ້ານມາດຕະການໂຄສະນາ, ສຶກສາອົບຮົມ, ອະທິບາຍ ໃຫ້ສະມາຊິກພັກ, ພະນັກງານ ຕະຫລອດຮອດປະຊາຊົນໄດ້ກຳແໜ້ນ ແລະ ເຂົ້າໃຈຢ່າງເລິກເຊິ່ງ ກ່ຽວກັບຄວາມໝາຍ ຄວາມສຳຄັນ ໃນການປົກປັກຮັກສາປ່າໄມ້ ໂດຍສະເພາະ ( ກົດໝາຍ ວ່າດ້ວຍປ່າໄມ້, ຄຳສັ່ງເລກທີ 17 /ນຍ, ລົງວັນທີ 22 ກັນຍາ 2008 ຂໍ້ຕົກລົງຂອງນາຍົກລັດຖະມົນຕີສະບັບເລກທີ 32/ນຍ,ລົງວັນທີ 06/3/2012 ແລະ ບັນດາຂໍ້ແນະນຳຕ່າງໆທີ່ພົວພັນເຖິງການຄຸ້ມຄອງຊັບພະຍາກອນປ່າໄມ້).
2. ໃຫ້ບັນດາເມືອງ, ບັນດາພະແນກການ, ກົມກອງຕ່າງໆອ້ອມຂ້າງແຂວງ ຢຸດຕິການພິຈາ

ລະບາ ແລະ ການເຊັນຢັ້ງຢືນຜ່ານຄຳຮ້ອງ, ຄຳສະເໜີຂໍໄມ້ປຸກສ້າງຂອງພະນັກງານແລະ ປະຊາຊົນເພື່ອໃຫ້ແຂວງພິຈາລະນາແກ້ໄຂໂດຍບໍ່ສອດຄ່ອງກັບລະບຽບ,ກົດໝາຍປ່າໄມ້.

- ໃນກໍລະນີມີຄວາມຈຳເປັນ ຜູ້ທີ່ບໍ່ທັນມີເຮືອນຢູ່, ກຳລັງປຸກສ້າງ, ສ້ອມແປງ,ຖືກອັກຄີ ໄພ, ໄພພິບັດນັ້ນ ແມ່ນໃຫ້ປະຕິບັດຕາມກົດໝາຍວ່າດ້ວຍປ່າໄມ້ ເລກທີ 06 /ສພຊ, ລົງວັນ ທີ 24 ທັນວາ 2007 ມາດຕາ 41 ( ການນຳໃຊ້ໄມ້ເພື່ອຄອບຄົວ ).
- ການນະໂຍບາຍໄມ້ໃຫ້ແກ່ພະນັກງານບຳນານ ແລະ ຄອບຄົວການນຳ,ຜູ້ມີຄຸນງາມ ຄວາມດີຕໍ່ປະເທດຊາດແມ່ນໃຫ້ປະຕິບັດຕາມ ຂໍ້ 4 ຂອງແຈ້ງການຫ້ອງວ່າການສູນກາງ ພັກເລກທີ 50/ຫສພ ລົງວັນທີ 09 ກຸມພາ 2012 ຢ່າງເຂັ້ມງວດ.
- ສຳລັບບັນດາໂຄງການກໍ່ສ້າງ, ສ້ອມແປງສຳນັກງານ, ອົງການຂອງລັດ, ຂອງສັງຄົມ ໃນ ແຕ່ລະເມືອງ,ແຕ່ລະບ້ານທີ່ໄດ້ຕົກລົງ ນຳໃຊ້ຊັບພະຍາກອນປ່າໄມ້ ເພື່ອຊຳລະສະສາງ ໄລ່ລຽງກັບມູນຄ່າກໍ່ສ້າງນັ້ນ ໃຫ້ແຕ່ລະເມືອງ ສະຫລຸບລະອຽດ ແລ້ວທັນເຂົ້າສູ່ລະບົບ ການຂຶ້ນແຜນງົບປະມານ ເພື່ອຊຳລະສະສາງໃນແຕ່ລະປີ.
- ບັນດາກິດຈະການ, ໂຄງການ ທີ່ເປັນບູລິມະສິດຂອງເມືອງ, ຂອງແຂວງ ແລະ ການແກ້ ໄຂໄພພິບັດ, ອັກຄີໄພຮ້າຍແຮງຕ່າງໆ ທີ່ເກີດຂຶ້ນ ເພື່ອແກ້ໄຂຊ່ວຍເຫລືອປະຊາຊົນນັ້ນ, ໃຫ້ເມືອງ, ຂະແໜງການກ່ຽວຂ້ອງເປັນຜູ້ເກັບກຳ, ລາຍງານ ແລະ ນຳສະເໜີຄະນະຮັບ ຜິດຊອບ ກໍຄືຂັ້ນເທິງພິຈາລະນາຕາມລະບຽບການ.

3. ໃຫ້ພະແນກກະສິກຳ ແລະ ປ່າໄມ້ແຂວງ, ພະແນກ ອຸດສາຫະກຳ ແລະ ການຄ້າແຂວງ ສົມທົບກັບຂະແໜງການກ່ຽວຂ້ອງ ເອົາໃຈໃສ່ຄຸ້ມຄອງ, ແນະນຳຂະແໜງກ່ຽວຂ້ອງຂັ້ນ ເມືອງລະອຽດຕື່ມ ກ່ຽວກັບການນຳໃຊ້ໄມ້ເພື່ອເປັນໄມ້ຄ້ຳແບບ, ໄມ້ຫລັກຮົ້ວ, ໄມ້ຟືນ ແລະ ໄມ້ເພື່ອເຜົາຖ່ານ. ອັນໃດຄວນສົ່ງເສີມ, ອັນໃດຄວນເກັບລາຍຮັບ ທັງນີ້ກໍ່ເພື່ອຖືເອົາ ວຽກງານດັ່ງກ່າວ ເປັນມາດຕະການຈຳກັດການຕັດໄມ້ດິບແບບຊະຊາຍ ພ້ອມດຽວກັນນັ້ນ ໃນບ່ອນທີ່ມີເງື່ອນໄຂ ກໍຄວນແນະນຳການນຳໃຊ້ໄມ້ເສດ, ລີ້ນໄມ້ ຢູ່ຕາມໂຮງງານຕ່າງໆ ທີ່ໄດ້ດັດສົມ ແລະ ໄມ້ໃນຂອບເຂດໂຄງການຕ່າງໆທີ່ລັດຖະບານອະນຸມັດ.
4. ບໍ່ອະນຸຍາດໃຫ້ມີການທັບປ່ຽນທີ່ດິນໃນເຂດ 3 ປະເພດປ່າໄມ້ ແລະ ໃນບ່ອນທີ່ມີປ່າ ໄມ້ຢູ່ນອກເຂດຂອງ 3 ປະເພດປ່າ ໂດຍບໍ່ຖືກຕ້ອງຕາມລະບຽບການ.
5. ຢຸດຕິການສຳລະໜີ້ສິນ ດ້ວຍການອະນຸຍາດໂກຕາໄມ້ ໃຫ້ແກ່ຜູ້ລົງທຶນ ໃນການກໍ່ສ້າງ ພື້ນຖານໂຄງລ່າງຕ່າງໆຂອງເມືອງ ແລະ ບໍ່ອະນຸຍາດໃຫ້ເອົາໄມ້ແລກປ່ຽນ ກັບໂຄງ ການໃນທຸກກໍລະນີ (ມາດຕາ 1 ຂໍ້ 2.4 ຂອງຂໍ້ຕົກລົງເລກທີ32/ນຍ).

6. ໃຫ້ພະແນກກະສິກຳ ແລະ ປ່າໄມ້ແຂວງ(ຂະແໜງປ່າໄມ້) ສົມທົບກັບພະແນກການກ່ຽວຂ້ອງ ເພີ່ມທະວີຢ່າງເຂັ້ມງວດໃນການກວດກາ, ຕີກາ ແລະ ເຊັກໄມ້ແປຮູບ,ໄມ້ສຳເລັດຮູບຂຶ້ນລົດ ທີ່ຈະເຄື່ອນຍ້າຍໄປພາຍໃນ ຫຼື ສົ່ງອອກຕ່າງປະເທດ ຕາມການອະນຸມັດຂອງລັດຖະບານ ແລະ ໃຫ້ເຊັກໄມ້ຂຶ້ນລົດຢູ່ປາກສາງຂອງໂຮງງານປຸງແຕ່ງໄມ້ທີ່ເຄື່ອນໄຫວຖືກຕ້ອງຕາມລະບຽບຫຼັກການເທົ່ານັ້ນ.
ສ່ວນການຄຸ້ມຄອງ ແລະ ນຳໃຊ້ຈັກຕັດໄມ້, ການນຳເຂົ້າ ແລະ ຈຳໜ່າຍເຄື່ອງຈັກດັ່ງກ່າວແມ່ນໃຫ້ປະຕິບັດຕາມ ຂໍ້ຕົກລົງຂອງລັດຖະມົນຕີ ສະບັບເລກທີ 0080/ກປ,ລົງວັນທີ 19/1/2012 ວ່າດ້ວຍລະບຽບການນຳເຂົ້າ, ການຄຸ້ມຄອງ ແລະ ການນຳໃຊ້ເຄື່ອງຈັກຕັດໄມ້ ແລະ ຄຳສັ່ງແນະນຳ ຂອງພະແນກກະສິກຳ ແລະ ປ່າໄມ້ແຂວງ ຄຳມ່ວນ ສະບັບເລກທີ 1223/ກປຂ, ລົງວັນທີ10/3/2010 ວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ຈັກຕັດໄມ້ຢ່າງເຂັ້ມງວດ.

7. ໃຫ້ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ສົມທົບພະແນກການກ່ຽວຂ້ອງສຸມໃສ່ການປັກຫຼັກໝາຍເຂດແດນປ່າສະຫງວນ ແລະ ປ່າປ້ອງກັນໃຫ້ຈະແຈ້ງເພື່ອສະດວກໃນການຄຸ້ມຄອງ ປົກປັກຮັກສາ ພ້ອມນັ້ນ ກໍ່ກຳນົດແຜນຈັດສັນ ຄຸ້ມຄອງທີ່ຕິດພັນກັບການພັດທະນາ ແລະ ປັບປຸງຊີວິດການເປັນຢູ່ຂອງປະຊາຊົນທີ່ອາໃສໃນເຂດປ່າສະຫງວນ, ປ່າປ້ອງກັນໃຫ້ດີຂຶ້ນກວ່າເກົ່າ.

8. ໃຫ້ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມສົມທົບກັບພາກສ່ວນທີ່ກ່ຽວຂ້ອງເອົາໃຈໃສ່ຢ່າງເຂັ້ມງວດໃນການເຄື່ອນໄຫວ ກວດກາ ການລ່າສັດນ້ຳ-ສັດປ່າ,ການຊື້-ການຂາຍຢູ່ທຸກສະຖານທີ່ ແລະ ມີໄວ້ຄອບຄອງທີ່ບໍ່ໄດ້ຮັບອະນຸຍາດ ແລະ ໃຫ້ປະຕິບັດຕາມພາກທີ 3 ໝວດທີ1 ມາດຕາ 24 ວ່າດ້ວຍການລ່າສັດນ້ຳ-ສັດປ່າແລະ ໝວດທີ 5, ມາດຕາ 52 ວ່າດ້ວຍຂໍ້ຫ້າມທົ່ວໄປ ຂອງກົດໝາຍວ່າດ້ວຍສັດນ້ຳ ແລະ ສັດປ່າ ສະບັບເລກທີ 07/ສພຊ ລົງວັນທີ 24 ທັນວາ 2007.

9. ໃຫ້ພະແນກ ໂຍທາທິການ ແລະ ຂົນສົ່ງແຂວງ ສົມທົບກັບຂະແໜງການກ່ຽວຂ້ອງຂັ້ນແຂວງ, ຂັ້ນເມືອງ ຕິດຕາມກວດກາ ແລະ ຊຸກຍູ້ພາກສ່ວນທີ່ມີພາຫະນະ ໂດຍສະເພາະປະເພດລົດຕູ້, ລົດກະບະບໍ່ມີປ້າຍທະບຽນ, ບໍ່ມີເບາະນັ່ງທາງຫລັງໃຫ້ຂຶ້ນທະບຽນ ແລະ ປະກອບໃສ່ໃຫ້ຖືກຕ້ອງຕາມເຕັກນິກ ເພື່ອຫລີກເວັ້ນການສວຍໂອກາດ ແກ່ຊັບພະຍາກອນປ່າໄມ້ທີ່ຜິດກົດໝາຍ.

10. ໃຫ້ບັນດາທ່ານ ເຈົ້າເມືອງ, ຫົວໜ້າພະແນກການ, ກົມກອງ ເຜີຍແຜ່ ເຊື່ອມຊຶມ ເນື້ອໃນຄຳສັ່ງແນະນຳສະບັບນີ້ໂດຍໄວ ແລະ ທົ່ວເຖິງ ເລິກເຊິ່ງ ແລະ ຖືເປັນຄວາມຮັບຜິດຊອບຂອງຕົນ.

11. ມອບໃຫ້ພະແນກກະສິກຳ ແລະ ປ່າໄມ້ແຂວງ, ພະແນກອຸດສາຫະກຳ ແລະ ການຄ້າແຂວງ ສົມທົບກັບຂະແໜງການກ່ຽວຂ້ອງ ເປັນໃຈກາງຊ່ວຍການນຳ ຢ່າງເປັນເຈົ້າການໃນການຊຸກຍູ້ ຕິດຕາມການຈັດຕັ້ງປະຕິບັດ.

12. ຄຳສັ່ງແນະນຳ ສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນ ເປັນຕົ້ນໄປ ແລະ ໃຫ້ແຕ່ລະເມືອງ, ແຕ່ລະຂະແໜງການ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ຖືເອົາຄຳສັ່ງສະບັບນີ້ ເປັນບ່ອນອີງໃນການຈັດຕັ້ງປະຕິບັດ.

ເຈົ້າແຂວງໆ ຄຳມ່ວນ

ຄຳໃບ ດຳລັດ

ບ່ອນສົ່ງ:

| | |
|---|---|
| - ເຈົ້າແຂວງ, ຮອງເຈົ້າແຂວງ ( ເພື່ອຊາບ ແລະ ຕິດຕາມ ) | 01 ສະບັບ. |
| - ບັນດາເມືອງ 10 ຕົວເມືອງ ( ເພື່ອຊາບ ແລະ ປະຕິບັດ ) | 01 ສະບັບ. |
| - ບັນດາພະແນກການກ່ຽວຂ້ອງ ( ເພື່ອຊາບ ແລະ ປະຕິບັດ ) | 01 ສະບັບ. |
| - ສຳເນົາ | 02 ສະບັບ. |